ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 207 /ລບ
ນະຄອນຫຼວງວຽງຈັນ, ວັນທີ 20.03.2020.

# ດຳລັດ
# ວ່າດ້ວຍ ວຽກງານຊົນເຜົ່າ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມ ໜັງສືສະເໜີຂອງ ກະຊວງພາຍໃນ ສະບັບເລກທີ 59/ພນ, ລົງວັນທີ 27 ກຸມພາ 2020.

## ລັດຖະບານ ອອກດຳລັດ:
## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາວຽກງານຊົນເຜົ່າ ເພື່ອໃຫ້ວຽກງານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ, ເຮັດໃຫ້ ຊົນເຜົ່າຕ່າງໆ ມີຄວາມສາມັກຄີປອງດອງ, ສະເໝີພາບ, ເຄົາລົບ ນັບຖື, ຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ, ຮັບປະກັນການມີສ່ວນຮ່ວມຂອງທຸກຊົນເຜົ່າ ເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊົນເຜົ່າຕ່າງໆ ຕາມລັດຖະທຳມະນູນ ແລະ ກົດໝາຍ ຂອງ ສປປ ລາວ.

### ມາດຕາ 2 ວຽກງານຊົນເຜົ່າ

ຊົນເຜົ່າ ແມ່ນ ກຸ່ມຄົນໜຶ່ງ ທີ່ມີເອກະລັກທາງດ້ານພາສາປາກເວົ້າ, ປະຫວັດຄວາມເປັນມາຕິດພັນກັບຊື່ ເອີ້ນ ແລະ ມີ ຮີດ, ຄອງ, ປະເພນີ ແລະ ວັດທະນະທຳ ອັນດຽວກັນ, ຊຶ່ງໄດ້ຜ່ານຂະບວນວິວັດອັນຍາວນານ ແລະ ຜູກພັນຢ່າງແໜ້ນແຟ້ນ ກາຍເປັນອົງຄະນາຍາດແຫ່ງຊາດລາວ ເອກະພາບທີ່ບໍ່ຕັດແຍກອອກຈາກກັນ ໄດ້.

ວຽກງານຊົນເຜົ່າ ແມ່ນ ການເຄື່ອນໄຫວຄຸ້ມຄອງລັດກ່ຽວກັບຊົນເຜົ່າ ເຊັ່ນ ການກຳນົດ ນະໂຍບາຍ, ນິຕິກຳ, ການສ້າງເງື່ອນໄຂອຳນວຍຄວາມສະດວກດ້ານຕ່າງໆ ເພື່ອປົກປ້ອງ ແລະ ພັດທະນາຊົນເຜົ່າຕ່າງໆ ໃຫ້ຄົງຕົວ ແລະ ຂະຫຍາຍຕົວຢູ່ບົນພື້ນແຜ່ນດິນ ແຫ່ງ ສປປ ລາວ ມີຄວາມສາມັກຄີ, ສະເໝີພາບ, ເຄົາລົບນັບຖື ຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ເພື່ອພ້ອມກັນກ້າວໜ້າ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ຊົງຄຸນວຸດທິ** ໝາຍເຖິງ ບຸກຄົນທີ່ມີບົດບາດ, ມີຄວາມຮູ້ທາງດ້ານທິດສະດີ ຫຼື ພຶດຕິກຳ ຊຶ່ງສັງຄົມໃຫ້ຄວາມເຄົາລົບ ແລະ ນັບຖື, ເປັນຜູ້ທີ່ສາມາດເຕົ້າໂຮມຄວາມສາມັກຄີ ແລະ ໃຫ້ຄຳແນະນຳແກ່ປະຊາຊົນເຜົ່າຕ່າງໆ;

2. **ຄວາມສາມັກຄີ** ໝາຍເຖິງ ຄວາມເຄົາລົບນັບຖື, ຄວາມຮັກແພງ ແລະ ຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ບົນພື້ນຖານແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ;

3. **ຄວາມສະເໝີພາບ** ໝາຍເຖິງ ຄວາມເທົ່າທຽມກັນທາງດ້ານສິດ ແລະ ພັນທະຂອງພົນລະເມືອງລາວໃນທຸກຊົນເຜົ່າຕໍ່ປະເທດຊາດ, ເທົ່າທຽມກັນທາງດ້ານສິດ ແລະ ຜົນປະໂຫຍດ ດ້ານການເມືອງ, ເສດຖະກິດ, ສັງຄົມ, ວັດທະນະທຳ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການດຳລົງຊີວິດຕາມລັດຖະທຳມະນູນ ແລະ ກົດໝາຍ ໂດຍປັດສະຈາກ ການຈຳແນກໃດໆ;

4. **ຮີດ** ໝາຍເຖິງ ງານບຸນ ຫຼື ພິທີກຳ ທີ່ໄດ້ຈັດຂຶ້ນໃນແຕ່ລະເດືອນ ໃນຮອບວຽນຂອງ ປີໜຶ່ງ;

5. **ຄອງ** ໝາຍເຖິງ ໜ້າທີ່ ທີ່ແຕ່ລະຄົນ, ບ້ານ, ຄອບຄົວ ປະຕິບັດຕໍ່ກັນ;

6. **ປະເພນີ** ໝາຍເຖິງ ລະບຽບແບບແຜນການປະພຶດຂອງຄົນເຮົາ ທີ່ສືບສານມາແຕ່ດຶກດຳບັນມາຮອດປັດຈຸບັນ;

7. **ເທດສະການ** ໝາຍເຖິງ ການຈັດງານບຸນປະເພນີ ແລະ ງານສະເຫຼີມສະຫຼອງຕ່າງໆ ປະຈຳຊາດ ຫຼື ທ້ອງຖິ່ນ;

8. **ນິທັດສະການ** ໝາຍເຖິງ ການຈັດສະແດງຜົນງານການຜະລິດ, ຜະລິດຕະພັນສິນຄ້າ ຫຼື ກິດຈະກຳທີ່ມວນຊົນຈັດຂຶ້ນບໍ່ເປັນປົກກະຕິ ແລະ ບໍ່ເປັນລັກສະນະປະເພນີ ຢູ່ຕາມສະຖານທີ່ໃດໜຶ່ງ ຊຶ່ງໄດ້ຮັບອະນຸຍາດ ຈາກທາງການ ເພື່ອໃຫ້ມວນຊົນໄດ້ທ່ຽວຊົມ, ຊື້, ຂາຍ, ແລກປ່ຽນ ແລະ ອື່ນໆ;

9. **ຊົງຊາວ** ໝາຍເຖິງ ຫົວໜ່ວຍໜຶ່ງຂອງການປະກອບສ້າງເປັນສາຍເລືອດດຽວກັນຕາມເຊື້ອບິດາ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຊົນເຜົ່າ**

ລັດ ຊຸກຍູ້, ສົ່ງເສີມ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທຸກພາກສ່ວນລວມທັງພາກລັດ ແລະ ເອກະຊົນ ເຂົ້າຮ່ວມຈັດຕັ້ງປະຕິບັດວຽກງານຊົນເຜົ່າ ດ້ວຍການເສີມຂະຫຍາຍ ມູນເຊື້ອແຫ່ງຄວາມສາມັກຄີປອງດອງ, ປະຕິບັດສິດສະເໝີພາບລະຫວ່າງຊົນເຜົ່າ ຕໍ່ໜ້າກົດໝາຍ, ປົກປັກຮັກສາ ແລະ ເສີມຂະຫຍາຍ ຮີດ, ຄອງ, ປະເພນີ ແລະ ວັດທະນະທຳອັນດີງາມ, ສ້າງຈິດສຳນຶກໃຫ້ຊົນເຜົ່າຕ່າງໆ ມີຄວາມເປັນປຶກແຜ່ນໃນຊາດລາວ ເອກະພາບ ແລະ ພູມໃຈ ໃນຊົນເຜົ່າຂອງຕົນ, ແກ້ໄຂຄວາມແຕກໂຕນກັນທາງດ້ານການພັດທະນາ, ສົ່ງເສີມຄວາມຮູ້, ຄວາມສາມາດ ແລະ ພູມປັນຍາ ຂອງແຕ່ລະຊົນເຜົ່າ ເພື່ອການປົກປັກຮັກສາ ແລະ ສ້າງສາປະເທດຊາດ.

ລັດ ບໍ່ອະນຸຍາດໃຫ້ມີການກະທຳທີ່ເປັນການແບ່ງແຍກ ແລະ ການປະພຶດທີ່ເປັນການຈຳແນກພາຍໃນຊົນເຜົ່າ ແລະ ລະຫວ່າງຊົນເຜົ່າດ້ວຍກັນ.

**ມາດຕາ 5 ຫຼັກການພື້ນຖານກ່ຽວກັບວຽກງານຊົນເຜົ່າ**

ວຽກງານຊົນເຜົ່າ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ສອດຄ່ອງກັບແນວທາງ, ນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ ແລະ ລະບຽບການຂອງລັດ;
2. ຮັບປະກັນຄວາມສາມັກຄີ, ສະເໝີພາບລະຫວ່າງຊົນເຜົ່າຕ່າງໆຢ່າງເປັນຮູບປະທໍາ;
3. ຮັບປະກັນການປະຕິບັດນະໂຍບາຍຊົນເຜົ່າຢ່າງເປັນເອກະພາບໃນທົ່ວປະເທດ, ເສີມຂະຫຍາຍຫົວຄິດປະດິດສ້າງຂອງທຸກຊົນເຜົ່າ ເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ;
4. ອະນຸລັກ ແລະ ສົ່ງເສີມພາສາປາກເວົ້າ, ຮີດ, ຄອງ, ປະເພນີ ທີ່ເປັນມູນເຊື້ອ ແລະ ວັດທະນະທໍາອັນດີງາມຂອງທຸກຊົນເຜົ່າ;
5. ຮັບປະກັນການມີສ່ວນຮ່ວມຂອງທຸກຊົນເຜົ່າ ຕໍ່ທຸກວຽກງານທີ່ສໍາຄັນຂອງຊາດ.

**ມາດຕາ 6 ພັນທະກ່ຽວກັບວຽກງານຊົນເຜົ່າ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ມີພັນທະ ເຄົາລົບ ແລະ ປະຕິບັດວຽກງານຊົນເຜົ່າ ຕາມກົດໝາຍ ແລະ ລະບຽບການຂອງລັດ.

**ມາດຕາ 7 ຂອບເຂດການນໍາໃຊ້ດໍາລັດ**

ດໍາລັດສະບັບນີ້ ນໍາໃຊ້ສໍາລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ, ເອກະຊົນທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານຊົນເຜົ່າ ຢູ່ ສປປ ລາວ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ອະນຸຍາດໃຫ້ກະຊວງ, ອົງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ມີການພົວພັນຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງພາກພື້ນ ແລະ ສາກົນ ກ່ຽວກັບວຽກງານ ຊົນເຜົ່າ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ການຄົ້ນຄວ້າວິທະຍາສາດ, ການພັດທະນາຊັບພະຍາກອນມະນຸດ ເພື່ອພັດທະນາ ວຽກງານຊົນເຜົ່າ ໃຫ້ມີຄວາມເຂັ້ມແຂງ, ທັນສະໄໝ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 2
## ນະໂຍບາຍວຽກງານຊົນເຜົ່າ

**ມາດຕາ 9 ນະໂຍບາຍວຽກງານຊົນເຜົ່າ**

ນະໂຍບາຍວຽກງານຊົນເຜົ່າ ມີດັ່ງນີ້:

1. ນະໂຍບາຍດ້ານເສດຖະກິດ-ການເງິນ;
2. ນະໂຍບາຍດ້ານການລົງທຶນ ແລະ ການນໍາໃຊ້ທ່າແຮງ;
3. ນະໂຍບາຍດ້ານການສຶກສາ ແລະ ກິລາ;
4. ນະໂຍບາຍດ້ານສາທາລະນະສຸກ;
5. ນະໂຍບາຍດ້ານວັດທະນະທໍາ ແລະ ທ່ອງທ່ຽວ;
6. ນະໂຍບາຍດ້ານການປົກປັກຮັກສາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ;
7. ນະໂຍບາຍດ້ານການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
8. ນະໂຍບາຍດ້ານຂໍ້ມູນ ຂ່າວສານ;

9. ນະໂຍບາຍດ້ານການເຂົ້າເຖິງກົດໝາຍ ແລະ ຂະບວນການຍຸຕິທຳ;
10. ນະໂຍບາຍດ້ານການສ້າງພະນັກງານ-ລັດຖະກອນ;
11. ນະໂຍບາຍດ້ານແຮງງານ, ສະຫວັດດີການ ແລະ ສັງຄົມ;
12. ນະໂຍບາຍຕໍ່ຜູ້ຊີງຄຸນງາມຄວາມດີ.

**ມາດຕາ 10 ນະໂຍບາຍດ້ານເສດຖະກິດ-ການເງິນ**

ນະໂຍບາຍດ້ານເສດຖະກິດ-ການເງິນ ມີ ດັ່ງນີ້:

1. ປັບປຸງ ແລະ ກໍ່ສ້າງ ໂຄງລ່າງພື້ນຖານທີ່ຈຳເປັນໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ລວມທັງສິ່ງອຳນວຍຄວາມສະດວກ ໃຫ້ຊົນເຜົ່າເຂົ້າເຖິງການບໍລິການ;

2. ຈັດສັນຊົນເຜົ່າທີ່ຢູ່ເຂດ ທຸລະກັນດານ, ຂາດເງື່ອນໄຂພັດທະນາ, ມີຄວາມສ່ຽງ ໃນການດຳລົງຊີວິດ, ມີລັກສະນະພິເສດ ແລະ ເຂດທີ່ຖືກໂຄງການພັດທະນາ ມາຢູ່ເຂດທີ່ມີເງື່ອນໄຂພັດທະນາ, ຈັດສັນອາຊີບຄົງທີ່ ແລະ ສ້າງວຽກເຮັດງານທຳ ຢ່າງເໝາະສົມ;

3. ສ້າງກົນໄກບໍລິຫານຄຸ້ມຄອງ ທີ່ເອື້ອອຳນວຍໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ໂດຍການມີສ່ວນຮ່ວມຂອງ ຊົນເຜົ່າ, ລັດ ແລະ ເອກະຊົນ;

4. ສົ່ງເສີມການຈັດຕັ້ງປະຕິບັດ ແຜນງານ, ໂຄງການໃນການພັດທະນາຊົນນະບົດ ທີ່ຕິດພັນກັບການພັດທະນາກະສິກຳເປັນສິນຄ້າ ແລະ ຄ້ຳປະກັນສະບຽງອາຫານ ແບບຍືນຍົງ;

5. ຊຸກຍູ້, ສົ່ງເສີມ ການພັດທະນາເສດຖະກິດ-ສັງຄົມ ແລະ ການບໍລິການ ເຂົ້າສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ;

6. ຊຸກຍູ້, ສົ່ງເສີມ ການພັດທະນາຜະລິດຕະພັນຫັດຖະກຳຊົນເຜົ່າທີ່ມີທ່າແຮງ, ເປັນເອກະລັກສະເພາະ ແລະ ເປັນມູນເຊື້ອຂອງຊົນເຜົ່າໃຫ້ມີຄຸນນະພາບສູງ ຕາມຄວາມຕ້ອງການຂອງຕະຫຼາດພາຍໃນ ແລະ ຕ່າງປະເທດ;

7. ຫັນການຜະລິດແບບທຳມະຊາດ ໄປສູ່ການຜະລິດທີ່ນຳໃຊ້ ເຕັກນິກວິທະຍາສາດ ແລະ ເຕັກໂນໂລຊີທີ່ທັນສະໄໝ ເພື່ອຍົກສູງຜະລິດຕະພາບຂອງການຜະລິດ, ຈັດຕັ້ງກຸ່ມຜະລິດ, ສະຫະກອນຕ່າງໆ ຕາມຄວາມເໝາະສົມ ແລະ ຂະຫຍາຍ ຫຼື ສ້າງຕະຫຼາດໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ໃຫ້ເປັນໃຈກາງເສດຖະກິດຕາມຮູບແບບຕົວເມືອງໃນຊົນນະບົດ;

8. ປະຕິບັດນະໂຍບາຍດ້ານ ພາສີ, ອາກອນ, ສິນເຊື່ອ, ການນຳໃຊ້ຊັບພະຍາກອນ ໃນພື້ນທີ່, ສົ່ງເສີມຜູ້ປະກອບການສຳລັບເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ຕາມກົດໝາຍ.

**ມາດຕາ 11 ນະໂຍບາຍດ້ານການລົງທຶນ ແລະ ນຳໃຊ້ທ່າແຮງ**

ນະໂຍບາຍດ້ານການລົງທຶນ ແລະ ນຳໃຊ້ທ່າແຮງ ມີ ດັ່ງນີ້:

1. ສົ່ງເສີມ ການລົງທຶນຂອງລັດ ເຂົ້າໃນການປັບປຸງ ແລະ ສ້າງໂຄງລ່າງພື້ນຖານທາງດ້ານເສດຖະກິດ-ສັງຄົມ ທີ່ຈຳເປັນ, ຊຸກຍູ້, ສົ່ງເສີມ ດ້ານເຕັກນິກ-ວິຊາການ, ການພັດທະນາ ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ຢ່າງມີຈຸດສຸມ;

2. ສົ່ງເສີມການລົງທຶນໃສ່ການຜະລິດສິນຄ້າກະສິກຳ ດ້ວຍນະໂຍບາຍດ້ານ ການເງິນ, ທະນາຄານ, ກະສິກຳສະອາດ, ເປີດກວ້າງການຕະຫຼາດ, ການຄຸ້ມຄອງ-ການດັດສົມລາຄາ, ການເກັບອາກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

3. ສົ່ງເສີມການນຳໃຊ້ທຶນຊ່ວຍເຫຼືອ ເພື່ອການພັດທະນາເສດຖະກິດ-ສັງຄົມ ຕິດພັນກັບການປັບປຸງຍົກລະດັບຊີວິດການເປັນຢູ່ ແລະ ການແກ້ໄຂຄວາມທຸກຍາກຂອງຊົນເຜົ່າຕ່າງໆ;

4. ສົ່ງເສີມການລົງທຶນ ເຂົ້າໃນການ ຕ້ານ, ສະກັດກັ້ນ ໄພພິບັດທາງທຳມະຊາດ ແລະ ປະຕິບັດນະໂຍບາຍສັງຄົມສົງເຄາະ ໃຫ້ຊົນເຜົ່າທີ່ທຸກຍາກ ແລະ ຜູ້ປະສົບໄພພິບັດທາງທຳມະຊາດ;

5. ສົ່ງເສີມ ການນຳໃຊ້ທຶນຂອງພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ເປັນຕົ້ນຕໍ;

6. ສ້າງ ແລະ ປັບປຸງ ນະໂຍບາຍການລົງທຶນ ຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ໃຫ້ຈະແຈ້ງ, ຊັດເຈນ ເພື່ອດຶງດູດການລົງທຶນຈາກພາກເອກະຊົນໃຫ້ຫຼາຍຂຶ້ນ ໂດຍນຳໃຊ້ ແຮງງານໃນພື້ນທີ່;

7. ສົ່ງເສີມການສ້າງເປັນ ກຸ່ມການຜະລິດ, ການປຸງແຕ່ງ, ກຸ່ມການເກັບຊື້ ຫຼື ກຸ່ມການບໍລິການ ແລະ ມີຄັງແຮ ເພື່ອຫຼຸດຕົ້ນທຶນໃນການຜະລິດ, ມີຄວາມສາມາດຕໍ່ລອງດ້ານ ການຈຳໜ່າຍ, ລາຄາ ແລະ ມີຫຼັກຊັບຄ້ຳປະກັນໃນການກູ້ຢືມເງິນຈາກສະຖາບັນການເງິນ;

8. ຊຸກຍູ້, ສົ່ງເສີມ ທ່າແຮງບົ່ມຊ້ອນ, ເສດຖະກິດພູມປັນຍາ, ການຜະລິດເປັນສິນຄ້າຕາມມູນເຊື້ອ ແລະ ເອກະລັກຂອງຊົນເຜົ່າ ຕິດພັນກັບການ ປຸງແຕ່ງ, ຈຳໜ່າຍຜະລິດຕະພັນ ແລະ ພັດທະນາໃຫ້ກາຍເປັນສິນຄ້າສົ່ງອອກ.

**ມາດຕາ 12 ນະໂຍບາຍດ້ານການສຶກສາ ແລະ ກິລາ**

ນະໂຍບາຍດ້ານການສຶກສາ ແລະ ກິລາ ມີ ດັ່ງນີ້:

1. ປັບປຸງ ແລະ ສ້າງ ໂຄງລ່າງພື້ນຖານດ້ານການສຶກສາໃຫ້ທົ່ວເຖິງ ໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ;

2. ປະຕິບັດນະໂຍບາຍຕໍ່ນັກຮຽນຊົນເຜົ່າຜູ້ທີ່ທຸກຍາກ ໃຫ້ໄດ້ຮັບນະໂຍບາຍເຂົ້າຮຽນ ໂດຍບໍ່ເສຍຄ່າ ແລະ ໃຫ້ບູລິມະສິດໃນການເຂົ້າຮຽນວິຊາຊີບ ຕາມກົດໝາຍ ແລະ ລະບຽບການ ທີ່ໄດ້ກຳນົດໄວ້;

3. ປະຕິບັດນະໂຍບາຍ ຍົກລະດັບຄູສອນ, ປັບປຸງວິທີການສອນຂອງຄູສອນ ຫ້ອງດ່ຽວ ແລະ ຫ້ອງຄວບ, ເອົາໃຈໃສ່ສ້າງຄູຊົນເຜົ່າ, ສະໜອງພະນັກງານຄູໃຫ້ເໝາະສົມກັບຈຳນວນນັກຮຽນ ຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ;

4. ປັບປຸງລະບົບໂຮງຮຽນສາມັນຊົນເຜົ່າ ໃຫ້ສອດຄ່ອງກັບເງື່ອນໄຂທີ່ຕັ້ງພູມລຳເນົາ ໃນແຕ່ລະບ່ອນເພື່ອເຮັດໃຫ້ເດັກນ້ອຍຊົນເຜົ່າໄດ້ເຂົ້າເຖິງການສຶກສາຢ່າງທົ່ວເຖິງ ແລະ ພັດທະນາຫຼັກສູດການຮຽນ-ການສອນພາສາລາວ ໃຫ້ສອດຄ່ອງ;

5. ຍົກສູງຄຸນນະພາບລະບົບໂຮງຮຽນວິຊາຊີບ, ສ້າງ, ບຳລຸງ, ຝຶກອົບຮົມຄູວິຊາຊີບ ຊົນເຜົ່າ;

6. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຍຸດທະສາດພັດທະນາຊັບພະຍາກອນມະນຸດ ແຫ່ງຊາດ ແລະ ວິໄສທັດ ໃນແຕ່ລະໄລຍະ ໃຫ້ທົ່ວເຖິງເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ;

7. ສົ່ງເສີມທຸກຊົນເຜົ່າເຂົ້າຮ່ວມ ແລະ ເສີມຂະຫຍາຍກິລາຊົນເຜົ່າໃຫ້ແຂງແຮງ ແລະ ທົ່ວເຖິງ.

**ມາດຕາ 13 ນະໂຍບາຍດ້ານສາທາລະນະສຸກ**

ນະໂຍບາຍດ້ານສາທາລະນະສຸກ ມີ ດັ່ງນີ້:

1. ປັບປຸງ ແລະ ກໍ່ສ້າງ ໂຮງໝໍນ້ອຍ ແລະ ຕູ້ຢາປະຈຳບ້ານ ຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ໃຫ້ສາມາດຮອງຮັບການບໍລິການຮັກສາສຸຂະພາບຂອງປະຊາຊົນເຜົ່າຕ່າງໆ;

2. ຍົກສູງຄຸນນະພາບການບໍລິການດ້ານການແພດ ເປັນຕົ້ນ ການປິ່ນປົວ, ການຟື້ນຟູໜ້າທີ່ການ, ການສົ່ງເສີມສຸຂະພາບ, ການກັນ ແລະ ຄວບຄຸມພະຍາດໃຫ້ແກ່ປະຊາຊົນເຜົ່າຕ່າງໆ ຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ;

3. ປະຕິບັດນະໂຍບາຍປິ່ນປົວແບບບໍ່ເສຍຄ່າສຳລັບບຸກຄົນ, ຄອບຄົວຂອງຊົນເຜົ່າ ຜູ້ທີ່ທຸກຍາກ ໃຫ້ສອດຄ່ອງກັບສະພາບຕົວຈິງ ໂດຍສະເພາະນະໂຍບາຍເກີດລູກ, ການປິ່ນປົວເດັກອາຍຸຕ່ຳກວ່າ ຫ້າ ປີ;

4. ສະໜອງນ້ຳສະອາດ, ແກ້ໄຂບັນຫາການຂາດສານອາຫານ ແລະ ປັບປຸງສຸຂານາໄມ ຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ເພື່ອໃຫ້ປະຊາຊົນເຜົ່າຕ່າງໆ ສາມາດເຂົ້າເຖິງ ນ້ຳສະອາດ ແລະ ນຳໃຊ້ວິດຖ່າຍ ໃຫ້ຫຼາຍກວ່າເກົ່າ;

5. ສົ່ງເສີມນະໂຍບາຍ ຊ່ວຍເຫຼືອແມ່ຍິງ ແລະ ເດັກ ຊົນເຜົ່າ ໃຫ້ເຂົ້າເຖິງການບໍລິການ ດ້ານສາທາລະນະສຸກ ຢ່າງທົ່ວເຖິງ;

6. ສ້າງ ແລະ ບຳລຸງ ພະນັກງານແພດຊົນເຜົ່າ ໂດຍສະເພາະແພດແບບຕໍ່ເນື່ອງ, ກັບທີ່ ຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ;

7. ສ້າງ ພະນັກງານສາທາລະນະສຸກ ທີ່ເປັນຊົນເຜົ່າ ທັງເພດຍິງ ແລະ ເພດຊາຍ ໃຫ້ໄດ້ ປະລິມານ ແລະ ຄຸນນະພາບ ເພື່ອປະຈຳ ຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ;

8. ຂະຫຍາຍຕາໜ່າງການປິ່ນປົວສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ໂດຍນຳໃຊ້ແບບແຜນວິທະຍາສາດ ການແພດທີ່ທັນສະໄໝ ສົມທົບແບບແຜນພື້ນເມືອງ ໃຫ້ທົ່ວເຖິງ;

9. ຊຸກຍູ້, ສົ່ງເສີມ ການສ້າງບ້ານສາທາລະນະສຸກແບບຢ່າງ ຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກໃຫ້ທົ່ວເຖິງ;

10. ຊຸກຍູ້, ສົ່ງເສີມ ໃຫ້ຊົນເຜົ່າ ມີຄວາມຮູ້ ແລະ ເຂົ້າໃຈຖືກຕ້ອງກ່ຽວກັບການຮັກສາສຸຂະພາບ, ການກັນພະຍາດ, ການບໍລິໂພກທີ່ຖືກຫຼັກ ອະນາໄມ ແລະ ໂພຊະນາການ ໂດຍມີການເຜີຍແຜ່ ແລະ ບັນຈຸເຂົ້າໃນຫຼັກສູດການສຶກສາ ແຕ່ຂັ້ນອະນຸບານ ຂຶ້ນໄປ;

11. ໂຄສະນາ, ເຜີຍແຜ່ ແລະ ປູກຈິດສຳນຶກ ໃຫ້ປະຊາຊົນເຜົ່າຕ່າງໆ ຮັບຮູ້ ແລະ ເຂົ້າໃຈກ່ຽວກັບຜົນກະທົບຂອງການຖືພາກ່ອນເກນອາຍຸ ແລະ ການແຕ່ງດອງ ກັບບຸກຄົນທີ່ຢູ່ໃນຕະກຸນ ຊິ່ງຊາວດຽວກັນຂອງບາງຊົນເຜົ່າ ຫຼື ເປັນຍາດໃກ້ຊິດກັນ.

**ມາດຕາ 14 ນະໂຍບາຍດ້ານວັດທະນະທຳ ແລະ ທ່ອງທ່ຽວ**

ນະໂຍບາຍດ້ານວັດທະນະທຳ ແລະ ທ່ອງທ່ຽວ ມີ ດັ່ງນີ້:

1. ສົ່ງເສີມການອະນຸລັກວັດທະນະທຳທີ່ເປັນເອກະລັກ ແລະ ເປັນມູນເຊື້ອອັນດີງາມ ຂອງແຕ່ລະຊົນເຜົ່າ;

2. ສົ່ງເສີມກິດຈະກຳຄົ້ນຄວ້າວິທະຍາສາດດ້ານ ວັດທະນະທຳ, ສິລະປະ, ວັນນະຄະດີ ແລະ ດົນຕີພື້ນເມືອງ ທີ່ເປັນເອກະລັກຂອງແຕ່ລະຊົນເຜົ່າ ໃຫ້ໄດ້ຮັບການຂຸດຄົ້ນ, ຟື້ນຟູ, ອະນຸລັກຮັກສາ; ເສີມຂະຫຍາຍບ້ານແບບຢ່າງ ດ້ານວັດທະນະທຳ ແລະ ບ້ານຕົວແບບທີ່ມີ ຫຼາຍຊົນເຜົ່າດຳລົງຊີວິດຮ່ວມບ້ານດຽວກັນ;

3. ສົ່ງເສີມໃຫ້ຊົນເຜົ່າ ໄດ້ສືບທອດມູນເຊື້ອວັດທະນະທຳ ອັນດີງາມຂອງຕົນ ແລະ ປະລະປະເພນີ ທີ່ບໍ່ສອດຄ່ອງ, ກີດຂວາງຄວາມກ້າວໜ້າຂອງຊົນເຜົ່າຕົນ ແລະ ສັງຄົມ;

4. ສົ່ງເສີມໃຫ້ຊົນເຜົ່າ ສ້າງສະໂມສອນບ້ານ, ຈັດ ງານວັດທະນະທຳຊົນເຜົ່າ, ງານປະເພນີປະຈຳທ້ອງຖິ່ນ, ງານນິທັດສະການ, ງານເທດສະການ ແລະ ງານບຸນສຳຄັນຕ່າງໆ ທີ່ສ່ອງແສງເຖິງເອກະລັກວັດທະນະທຳ, ແບບແຜນການດຳລົງຊີວິດຂອງຊົນເຜົ່າ ເພື່ອເສີມຂະຫຍາຍການທ່ອງທ່ຽວ ຢູ່ໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ;

5. ສ້າງຈິດສຳນຶກໃຫ້ຊົນເຜົ່າ ມີການອະນຸລັກປົກປັກຮັກສາວັດທະນະທຳ ແລະ ຮີດ, ຄອງ, ປະເພນີທີ່ເປັນສິ່ງເອກອ້າງທະນົງໃຈຂອງຕົນ;

6. ເຄົາລົບ ນັບຖື ຮີດ, ຄອງ, ປະເພນີ ແລະ ວັດທະນະທຳ ທີ່ຫຼາກຫຼາຍສີສັນຂອງ ກັນ ແລະ ກັນເພື່ອປະກອບສ່ວນສ້າງວັດທະນະທຳອັນດີງາມຂອງຊົນເຜົ່າ ແລະ ຂອງຊາດ;

7. ຈັດຕັ້ງໃຫ້ມີການເຄື່ອນໄຫວເສີມຂະຫຍາຍວັດທະນະທຳອັນດີງາມຂອງຊົນເຜົ່າ ແລະ ການແລກປ່ຽນວັດທະນະທຳ ລະຫວ່າງຊົນເຜົ່າດ້ວຍກັນ ຢູ່ພາຍໃນ ແລະ ຕ່າງປະເທດ;

8. ສົ່ງເສີມຜະລິດຕະພັນຫັດຖະກຳຂອງຊົນເຜົ່າ ແລະ ສ້າງເຂດທ່ອງທ່ຽວທີ່ອະນຸລັກວັດທະນະທຳຊົນເຜົ່າ ແບບຍືນຍົງ;

9. ສົ່ງເສີມການ ຟື້ນຟູ, ອະນຸລັກ, ປົກປັກຮັກສາ, ສືບທອດມູນເຊື້ອ ແລະ ຄຸນຄ່າ ທາງມໍຣະດົກດ້ານວັດທະນະທຳ ແລະ ການທ່ອງທ່ຽວ ທີ່ເປັນເອກະລັກອັນດີງາມຂອງຊົນເຜົ່າ;

10. ປັບປຸງ ແລະ ພັດທະນາຜະລິດຕະພັນວັດທະນະທຳຊົນເຜົ່າ ໃຫ້ມີຄວາມຫຼາກຫຼາຍ ແລະ ມີຄຸນນະພາບສູງ ປະກອບສ່ວນເຂົ້າໃນການພັດທະນາ, ການປັບປຸງຊີວິດການເປັນຢູ່ ຂອງຊົນເຜົ່າ;

11. ປັບປຸງ ແລະ ສ້າງພື້ນຖານການທ່ອງທ່ຽວທຳມະຊາດ, ທ່ອງທ່ຽວວັດທະນະທຳ ແລະ ປະຫວັດສາດ ໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ.

**ມາດຕາ 15 ນະໂຍບາຍດ້ານການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

ນະໂຍບາຍດ້ານການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີດັ່ງນີ້:

1. ປັບປຸງກົນໄກການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຢູ່ໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ໃຫ້ມີຄວາມຍືນຍົງ;

2. ຈັດສັນການນຳໃຊ້ທີ່ດິນ ໂດຍໃຫ້ປະຊາຊົນເຜົ່າຕ່າງໆມີສ່ວນຮ່ວມ ເພື່ອປົກປັກຮັກສາ, ນຳໃຊ້ເຂົ້າໃນການຜະລິດ ແລະ ດຳລົງຊີວິດ ຕາມກົດໝາຍ ແລະ ລະບຽບການ;

3. ສ້າງລະບຽບການກ່ຽວກັບ ການປົກປັກຮັກສາສິ່ງແວດລ້ອມ, ການຂຸດຄົ້ນ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ເຂົ້າໃນການພັດທະນາ ແລະ ມີສ່ວນຮ່ວມ ໃນການປົກປັກຮັກສາ ສິ່ງແວດລ້ອມ;

4. ໂຄສະນາ, ສຶກສາອົບຮົມ, ສົ່ງເສີມການປົກປັກຮັກສາສິ່ງແວດລ້ອມ ດ້ວຍການ ເຜີຍແຜ່ຂໍ້ມູນຂ່າວສານ, ປຸກຈິດສຳນຶກ, ສ້າງຄວາມຮັບຮູ້ ແລະ ເຂົ້າໃຈ ເພື່ອໃຫ້ຊົນເຜົ່າເຫັນໄດ້ເຖິງ ຄວາມສຳຄັນຂອງສິ່ງແວດລ້ອມຕໍ່ການດຳລົງຊີວິດປະຈຳວັນ ພ້ອມທັງປຸກລະດົມການປະຕິບັດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບສິ່ງແວດລ້ອມ ຢ່າງເຂັ້ມງວດ;

5. ຊຸກຍູ້, ສົ່ງເສີມການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢູ່ໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ໃຫ້ມີຄວາມຍືນຍົງ ດ້ວຍການຈັດສັນອາຊີບຄົງທີ່ ແລະ ສ້າງວຽກເຮັດງານທຳໃຫ້ແກ່ຊົນເຜົ່າ;

6. ດຳເນີນການ ສຶກສາ, ເກັບກຳຂໍ້ມູນ ແລະ ປະເມີນຜົນກະທົບການປ່ຽນແປງດິນຟ້າອາກາດ ຕໍ່ກັບການດຳລົງຊີວິດຂອງຊົນເຜົ່າ ເພື່ອສ້າງແຜນກຳນົດເຂດຄວາມສ່ຽງທີ່ອາດເກີດ ໄພພິບັດຕ່າງໆ.

**ມາດຕາ 16 ນະໂຍບາຍດ້ານການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**

ນະໂຍບາຍດ້ານການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີ ດັ່ງນີ້:

1. ກໍ່ສ້າງ, ປັບປຸງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ເຂດຍຸດທະສາດ, ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ, ເຂດຊາຍແດນທີ່ຕິດພັນກັບການພັດທະນາ ເສດຖະກິດ-ສັງຄົມ, ຫັນລົງກໍ່ສ້າງຮາກຖານການເມືອງ ພັດທະນາຊົນນະບົດລຶບລ້າງຄວາມທຸກຍາກ ຕິດພັນກັບການກໍ່ສ້າງທ່າ ສະໜາມປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສາມ ຂັ້ນ, ສ້າງບ້ານປ້ອມໝັ້ນສູ້ຮົບ ແລະ ກຸ່ມບ້ານສູ້ຮົບຕິດລຽນ, ແກ້ໄຂໜໍ່ແໜງທີ່ກໍ່ຄວາມບໍ່ສະຫງົບ ແລະ ປະຕິບັດວຽກງານສາມສ້າງ;

2. ໂຄສະນາ, ສຶກສາອົບຮົມການເມືອງແນວຄິດ, ແນວທາງນະໂຍບາຍ, ກົດໝາຍ ແລະ ນິຕິກຳຕ່າງໆກ່ຽວກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ຊົນເຜົ່າຮັບຮູ້ ແລະ ເຂົ້າໃຈດ້ວຍເນື້ອໃນ, ຮູບການ, ວິທີການທີ່ສອດຄ່ອງກັບແຕ່ລະເຂດ ແລະ ແຕ່ລະເປົ້າໝາຍ;

3. ສຶກສາອົບຮົມ ແລະ ສ້າງເງື່ອນໄຂ ໃຫ້ປະຊາຊົນເຜົ່າຕ່າງໆ ມີສ່ວນຮ່ວມໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາມແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນ ແລະ ຮອບດ້ານ;

4. ປັບປຸງການຄຸ້ມຄອງສັງຄົມ, ການຄຸ້ມຄອງພົນລະເມືອງ, ຄຸ້ມຄອງສຳມະໂນຄົວ ແລະ ແກ້ໄຂການເຄື່ອນຍ້າຍຖິ່ນຖານພູມລຳເນົາທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ໃຫ້ທັນເວລາ, ມີປະສິດທິຜົນ;

5. ກໍ່ສ້າງ, ປັບປຸງຕາໜ່າງ ກອງຫຼອນ, ປກສ ບ້ານ ແລະ ກຸ່ມບ້ານໃນເຂດຊົນນະບົດ ຫ່າງໄກສອກຫຼີກ ໃຫ້ເຂັ້ມແຂງ ໜັກແໜ້ນ ດ້ວຍວິທີການສຶກສາອົບຮົມການເມືອງແນວຄິດ, ສິລະປະຍຸດ, ຍຸດທະວິທີ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢ່າງເປັນປົກກະຕິ;

6. ເອົາໃຈໃສ່ປະຕິບັດນະໂຍບາຍຍ້ອງຍໍ ທາງດ້ານວັດຖຸ ແລະ ຈິດໃຈໃຫ້ແກ່ຊົນເຜົ່າ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**ມາດຕາ 17 ນະໂຍບາຍດ້ານຂໍ້ມູນ ຂ່າວສານ**

ນະໂຍບາຍດ້ານຂໍ້ມູນ ຂ່າວສານ ມີ ດັ່ງນີ້:

1. ເຜີຍແຜ່ຂໍ້ມູນ ຂ່າວສານ, ແນວທາງ, ນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການ ຂອງລັດ ໃຫ້ປະຊາຊົນເຜົ່າຕ່າງໆເປັນພາສາຊົນເຜົ່າ ຫຼື ຜ່ານຜູ້ແປພາສາ, ຜ່ານສື່ສິ່ງພິມ ແລະ ສື່ເອເລັກໂຕຣນິກ;

2. ຂະຫຍາຍຕາໜ່າງໂທລະຄົມມະນາຄົມ ແລະ ການສື່ສານໃນຂອບເຂດທົ່ວປະເທດ ເພື່ອໃຫ້ ປະຊາຊົນເຜົ່າຕ່າງໆ ສາມາດນຳໃຊ້ບໍລິການໄດ້ຢ່າງທົ່ວເຖິງ;

3. ສ້າງ, ປັບປຸງລາຍການວິທະຍຸກະຈາຍສຽງ ແລະ ໂທລະພາບແຫ່ງຊາດ ແລະ ທ້ອງຖິ່ນ ທີ່ເປັນພາສາຊົນເຜົ່າ ໃຫ້ມີຄຸນນະພາບ, ປະສິດທິຜົນສູງຂຶ້ນ, ສາມາດສຶກສາອົບຮົມ ແນວທາງ, ນະໂຍບາຍ ຂອງພັກ, ກົດໝາຍ, ລະບຽບການຂອງລັດ ແລະ ເປັນສິ່ງຈູງໃຈ ຂອງປະຊາຊົນເຜົ່າຕ່າງໆ.

**ມາດຕາ 18 ນະໂຍບາຍດ້ານການເຂົ້າເຖິງກົດໝາຍ ແລະ ຂະບວນການຍຸຕິທຳ**

ນະໂຍບາຍດ້ານການເຂົ້າເຖິງກົດໝາຍ ແລະ ຂະບວນການຍຸຕິທຳ ມີ ດັ່ງນີ້:

1. ສ້າງ ແລະ ຂະຫຍາຍ ຕາໜ່າງການບໍລິການຊ່ວຍເຫຼືອທາງດ້ານກົດໝາຍ ເພື່ອໃຫ້ຊົນເຜົ່າທີ່ຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ;

2. ຊຸກຍູ້, ສົ່ງເສີມ ການຈັດຕັ້ງ ແລະ ບຸກຄົນໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ແກ່ຊົນເຜົ່າຜູ້ທີ່ທຸກຍາກ, ດ້ອຍໂອກາດ ຫຼື ພິການ ເພື່ອໃຫ້ສາມາດໄດ້ຮັບຂໍ້ມູນ ຂ່າວສານ, ການໃຫ້ຄຳປຶກສາທາງດ້ານກົດໝາຍ, ການຊ່ວຍເຫຼືອກ່ຽວກັບເອກະສານທີ່ກ່ຽວຂ້ອງ ແລະ ການເປັນຜູ້ຕາງໜ້າໃນການດຳເນີນຄະດີ ໂດຍບໍ່ເສຍຄ່າ;

3. ສ້າງ ແລະ ປັບປຸງວິທີການ ແລະ ຂັ້ນຕອນການຊ່ວຍເຫຼືອທາງດ້ານກົດໝາຍ ໃຫ້ມີຄວາມຄ່ອງຕົວ ແລະ ວ່ອງໄວ ເພື່ອໃຫ້ປະຊາຊົນເຜົ່າຕ່າງໆ ຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ ຢ່າງທັນການ;

4. ເອົາໃຈໃສ່ຊຸກຍູ້ ແລະ ສົ່ງເສີມ ວຽກງານໂຄສະນາເຜີຍແຜ່ກົດໝາຍ ດ້ວຍຫຼາຍວິທີ, ຫຼາຍຮູບແບບ ໂດຍຜ່ານສື່ສິ່ງພິມຕ່າງໆ ລວມທັງເປັນພາສາຊົນເຜົ່າ, ທຸກກະຊວງ, ອົງການ ຕ້ອງໄດ້ຈັດພິມປຶ້ມກົດໝາຍ ແຈກຢາຍໃຫ້ປະຊາຊົນເຜົ່າຕ່າງໆ ໃນເຂດຊົນນະບົດ, ຫ່າງໄກສອກຫຼີກໄດ້ອ່ານ, ຮຽນຮູ້ ແລະ ເຂົ້າໃຈ ກົດໝາຍ ແລະ ລະບຽບການ ເພື່ອໃຫ້ເຂົາເຈົ້າສາມາດເຂົ້າເຖິງການບໍລິການກົດໝາຍຂອງລັດ ແນໃສ່ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຕົນ.

### ມາດຕາ 19 ນະໂຍບາຍດ້ານການສ້າງພະນັກງານ-ລັດຖະກອນ

ນະໂຍບາຍດ້ານການສ້າງພະນັກງານ-ລັດຖະກອນ ມີ ດັ່ງນີ້:

1. ລັດ ມີນະໂຍບາຍບຸລິມະສິດ ໃຫ້ແກ່ການພັດທະນາພະນັກງານຊົນເຜົ່າ ທາງດ້ານປະລິມານ ແລະ ຄຸນນະພາບ ໂດຍສະເພາະຕໍ່ເຜົ່າຕ່າງໆ ທີ່ມີຈໍານວນພົນລະເມືອງບໍ່ຫຼາຍ ເຮັດໃຫ້ອັດຕາສ່ວນພະນັກງານຊົນເຜົ່າ ໃນຖັນແຖວພະນັກງານນໍາພາ, ຄຸ້ມຄອງ ແລະ ວິຊາການ ມີຄວາມເໝາະສົມກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ຂອງຊາດ ໃນແຕ່ລະໄລຍະ;

2. ບັນຈຸ, ສັບຊ້ອນພະນັກງານ-ລັດຖະກອນຊົນເຜົ່າ ເຂົ້າໃນອົງການຈັດຕັ້ງຂອງພັກ-ລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຕາມກົດໝາຍ ແລະ ລະບຽບການ;

3. ບໍາລຸງກໍ່ສ້າງ ພະນັກງານ-ລັດຖະກອນວິຊາການດ້ານຕ່າງໆ ຂອງຊົນເຜົ່າຢູ່ແຕ່ລະທ້ອງຖິ່ນ ໃຫ້ໄດ້ຮັບການຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານທິດສະດີ, ວິຊາສະເພາະ ແລ້ວກັບຄືນໄປປະຈໍາຢູ່ທ້ອງຖິ່ນຮາກຖານຂອງຕົນ ເພື່ອໃຫ້ກາຍເປັນພະນັກງານຫຼັກແຫຼ່ງ ຢູ່ເຂດດັ່ງກ່າວ;

4. ສົ່ງເສີມການປະຕິບັດນະໂຍບາຍຕໍ່ ພະນັກງານ-ລັດຖະກອນ ທີ່ໄປປະຕິບັດໜ້າທີ່ວຽກງານຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ໂດຍຕິດພັນກັບການສ້າງພະນັກງານກັບທີ່ໃຫ້ສອດຄ່ອງກັບສະພາບຕົວຈິງ ໃນແຕ່ລະໄລຍະ;

5. ເອົາໃຈໃສ່ກໍ່ສ້າງ, ບໍາລຸງຍົກລະດັບພະນັກງານ-ລັດຖະກອນຫຼັກແຫຼ່ງທີ່ເປັນຊົນເຜົ່າ, ສົ່ງເສີມບົດບາດ ຍິງ-ຊາຍ ຫຼື ພະນັກງານສືບທອດຊົນເຜົ່າ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ;

6. ກໍານົດແຜນໃນການບໍາລຸງ, ກໍ່ສ້າງ ພະນັກງານ-ລັດຖະກອນຊົນເຜົ່າ ແຕ່ລະເປົ້າໝາຍ, ແຕ່ລະປະເພດຢ່າງຮັດກຸມ, ຈະແຈ້ງ ເພື່ອຮັບປະກັນການສ້າງພະນັກງານຊົນເຜົ່າທີ່ສືບທອດ ແລະ ປ່ຽນແທນເປັນລຸ້ນໆ.

### ມາດຕາ 20 ນະໂຍບາຍດ້ານແຮງງານ, ສະຫວັດດີການ ແລະ ສັງຄົມ

ນະໂຍບາຍດ້ານແຮງງານ, ສະຫວັດດີການ ແລະ ສັງຄົມ ມີ ດັ່ງນີ້:

1. ສ້າງສູນຝຶກສີມືແຮງງານ ພ້ອມປະກອບອຸປະກອນການຝຶກ ແລະ ຄູ ໃຫ້ແກ່ສູນຝຶກຕາມທ່າແຮງຂອງທ້ອງຖິ່ນ ເພື່ອສ້າງເງື່ອນໄຂໃຫ້ປະຊາຊົນເຜົ່າຕ່າງໆ ໄດ້ເຂົ້າຝຶກ ແລະ ສາມາດປະກອບອາຊີບໄດ້;

2. ປະຕິບັດນະໂຍບາຍບໍ່ເສຍຄ່າ ໃນການເຂົ້າຝຶກສີມືແຮງງານ ແລະ ການພັດທະນາສີມືແຮງງານໃຫ້ແກ່ປະຊາຊົນເຜົ່າຕ່າງໆ;

3. ຈັດການຝຶກສີມືແຮງງານນອກສະຖານທີ່ ຕາມສະຖານທີ່ທໍາການຜະລິດຢູ່ທ້ອງຖິ່ນ;

4. ໃຫ້ບູລິມະສິດແກ່ປະຊາຊົນເຜົ່າຕ່າງໆ ໃນການເຂົ້າເຮັດວຽກໃນຫົວໜ່ວຍແຮງງານຕ່າງໆ ຢູ່ທ້ອງຖິ່ນ ຫຼື ເຂດໃກ້ຄຽງ ເພື່ອໃຫ້ມີລາຍໄດ້ຕາມຄວາມຮູ້ຄວາມສາມາດ;

5. ສະໜອງຂໍ້ມູນຂ່າວສານດ້ານການຝຶກສີມືແຮງງານ ແລະ ຄວາມຕ້ອງການຂອງຕະຫຼາດແຮງງານໃຫ້ແກ່ປະຊາຊົນເຜົ່າຕ່າງໆ ໄດ້ຮັບຮູ້ຢ່າງກວ້າງຂວາງ;

6. ປະຕິບັດນະໂຍບາຍສັງຄົມສົງເຄາະໃຫ້ແກ່ປະຊາຊົນເຜົ່າຕ່າງໆ ທີ່ທຸກຍາກ, ຢູ່ເຂດຊົນນະບົດ, ຫ່າງໄກສອກຫຼີກ ແລະ ຜູ້ປະສົບໄພພິບັດທາງທໍາມະຊາດ.

### ມາດຕາ 21 ນະໂຍບາຍຕໍ່ຜູ້ຊົງຄຸນວຸດທິ

ນະໂຍບາຍຕໍ່ຜູ້ຊົງຄຸນວຸດທິ ມີ ດັ່ງນີ້:

1. ເສີມຂະຫຍາຍບົດບາດຂອງຜູ້ຊົງຄຸນວຸດທິຊົນເຜົ່າຕ່າງໆ ເຂົ້າໃນວຽກງານສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີລະຫວ່າງຊົງຊາວ ແລະ ປະຊາຊົນເຜົ່າຕ່າງໆ, ການແກ້ໄຂຂໍ້ຂັດແຍ່ງຢູ່ຂັ້ນບ້ານ ເພື່ອສ້າງ

ຄວາມສາມັກຄີປອງດອງ, ເສີມຂະຫຍາຍສິດ ແລະ ປະຊາທິປະໄຕຂອງປະຊາຊົນເຜົ່າຕ່າງໆ ຢູ່ເຂດຊົນນະບົດ, ຫ່າງໄກສອກຫຼີກ;

2. ເຜີຍແຜ່ ແນວທາງ, ນະໂຍບາຍຂອງພັກ, ກົດໝາຍ, ລະບຽບການຂອງລັດ, ຂໍ້ມູນ ຂ່າວສານ ແລະ ຝຶກອົບຮົມ ໃຫ້ຜູ້ຊົງຄຸນວຸດທິຂອງຊົນເຜົ່າ ເພື່ອໃຫ້ເຂົາເຈົ້າເປັນຫຼັກແຫຼ່ງໃນການເຕົ້າໂຮມຄວາມສາມັກຄີ ແລະ ສຶກສາອົບຮົມລູກຫຼານ;

3. ຄົ້ນຄວ້າ, ກໍານົດມາດຕະຖານ, ເງື່ອນໄຂ, ເກັບກໍາບັນຊີ ແລະ ສ້າງນະໂຍບາຍຕໍ່ ຜູ້ຊົງຄຸນວຸດທິ ເຊັ່ນ ການເຂົ້າຮ່ວມກອງປະຊຸມ, ທັດສະນະສຶກສາ, ປິ່ນປົວສຸຂະພາບ, ໃຫ້ຂອງຂວັນ ຫຼື ຍ້ອງຍໍ ໃນວັນສໍາຄັນຕ່າງໆ;

4. ຈັດກອງປະຊຸມຜູ້ຊົງຄຸນວຸດທິ ແລະ ງານມະໂຫລານວັດທະນະທໍາຊົນເຜົ່າ ຢູ່ໃນ ສປປ ລາວ ຢູ່ຂັ້ນສູນກາງ ຫ້າ ປີ ເທື່ອໜຶ່ງ ຫຼື ຕາມເງື່ອນໄຂຕົວຈິງ ແລະ ສໍາລັບຢູ່ຂັ້ນແຂວງ ແລະ ຂັ້ນເມືອງ ຈັດຂຶ້ນ ສາມ ປີ ເທື່ອໜຶ່ງ ຫຼື ຕາມເງື່ອນໄຂຕົວຈິງ.

## ໝວດທີ 3
## ຂໍ້ຫ້າມ

### ມາດຕາ 22 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ແບ່ງແຍກ, ຈໍາແນກ, ສ້າງ ຄວາມຂັດແຍ່ງ, ຄວາມປໍລະປັກກັນ ແລະ ໝິ່ນປະໝາດສຽດສີ ທີ່ເປັນສາເຫດກໍ່ໃຫ້ເກີດຄວາມເຂົ້າໃຈຜິດຕໍ່ກັນລະຫວ່າງຊົນເຜົ່າດຽວກັນ ຫຼື ຊົນເຜົ່າອື່ນ;

2. ສວຍໃຊ້ຈຸດພິເສດ, ຈິດຕະສາດຂອງຊົນເຜົ່າ ເພື່ອໂຄສະນາ, ເຜີຍແຜ່ ວັດທະນະທໍາ, ແບບແຜນດໍາລົງຊີວິດທີ່ຂັດກັບ ຮີດ, ຄອງ, ປະເພນີ ແລະ ວັດທະນະທໍາ ອັນດີງາມຂອງ ຊາດ, ທ້ອງຖິ່ນ, ເຜົ່າ ທີ່ຂັດກັບກົດໝາຍ ແລະ ລະບຽບການ;

3. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 23 ຂໍ້ຫ້າມສໍາລັບເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ນະໂຍບາຍຊົນເຜົ່າ, ໜ້າທີ່, ຕໍາແໜ່ງ, ຄວາມຮັບຜິດຊອບຂອງຕົນ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ພັກພວກ ຫຼື ການຈັດຕັ້ງ ໂດຍບໍ່ຖືກຕ້ອງ ຕາມ ກົດໝາຍ ແລະ ລະບຽບການ;

2. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທໍາ, ຂາດຈັນຍາບັນ, ຈັນຍາທໍາ, ມີພຶດຕິກໍາ ຈໍາແນກ ຫຼື ດູຖູກຊົນເຜົ່າ, ໃຫ້ການບໍລິການທີ່ບໍ່ມີຄຸນນະພາບ ແລະ ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

3. ປອມແປງເອກະສານ, ກົດໜ່ວງຖ່ວງດຶງ ແລະ ເຮັດເອກະສານກ່ຽວກັບວຽກງານຊົນເຜົ່າ ຕົກເຮ່ຍເສຍຫາຍ;

4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ການຄຸ້ມຄອງ ແລະ ການກວດກາ ວຽກງານຊົນເຜົ່າ

**ມາດຕາ 24 ອົງການຄຸ້ມຄອງວຽກງານຊົນເຜົ່າ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຊົນເຜົ່າຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກະຊວງພາຍໃນ ເປັນເຈົ້າການຮັບຜິດຊອບໂດຍກົງ ໃນການປະສານສົມທົບກັບກະຊວງ, ອົງການຕ່າງໆ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຊົນເຜົ່າ ຕາມພາລະບົດບາດຂອງຕົນ.

ອົງການຄຸ້ມຄອງວຽກງານຊົນເຜົ່າ ປະກອບດ້ວຍ:

1.ກະຊວງພາຍໃນ;

2.ພະແນກພາຍໃນ ແຂວງ, ນະຄອນຫຼວງ;

3.ຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງກະຊວງພາຍໃນ**

ໃນການຄຸ້ມຄອງວຽກງານຊົນເຜົ່າ ກະຊວງພາຍໃນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດ ຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ລະບຽບການ ແລະ ດຳລັດກ່ຽວກັບວຽກງານຊົນເຜົ່າ;

2. ຄົ້ນຄວ້າ ສ້າງ ແລະ ປັບປຸງນິຕິກຳ, ແຜນຍຸດທະສາດ, ແຜນການ, ໂຄງການ ກ່ຽວກັບ ວຽກງານຊົນເຜົ່າ;

3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ ແລະ ໂຄງການ ກ່ຽວກັບວຽກງານຊົນເຜົ່າ ພ້ອມທັງແນະນຳການຈັດຕັ້ງປະຕິບັດດຳລັດສະບັບນີ້ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ;

4. ສ້າງຄວາມເຂັ້ມແຂງໃຫ້ການຈັດຕັ້ງ ແລະ ບຸກຄະລາກອນທີ່ຮັບຜິດຊອບການຄຸ້ມຄອງລັດກ່ຽວກັບວຽກງານຊົນເຜົ່າ;

5. ສ້າງກົນໄກ ແລະ ລະບຽບການໃຫ້ຊົນເຜົ່າໄດ້ເຂົ້າຮ່ວມຂະບວນການປຶກສາຫາລື, ປະກອບຄຳຄິດເຫັນ, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຊົນເຜົ່າ;

6. ສ້າງແຜນບຳລຸງ ແລະ ຍົກລະດັບຄວາມຮູ້, ຄວາມສາມາດ ໃຫ້ພະນັກງານ-ລັດຖະກອນ ເພື່ອໃຫ້ສາມາດນຳເອົາຄວາມກ້າວໜ້າທາງວິທະຍາສາດ ທຳມະຊາດ ແລະ ສັງຄົມ ມາພັດທະນາວຽກງານຊົນເຜົ່າ;

7. ເປັນເຈົ້າການໃນການປະສານສົມທົບກັບກະຊວງ, ອົງການຕ່າງໆ ທັງສູນກາງ ແລະ ທ້ອງຖິ່ນໃນການຈັດຕັ້ງປະຕິບັດນະໂຍບາຍຊົນເຜົ່າ;

8. ປະຕິບັດການແບ່ງງານ, ແບ່ງຄວາມຮັບຜິດຊອບ ແລະ ແບ່ງຂັ້ນຄຸ້ມຄອງຂອງລັດກ່ຽວກັບວຽກງານຊົນເຜົ່າ;

9. ຄົ້ນຄວ້າ, ນຳສະເໜີຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂຂໍ້ຂັດແຍ່ງ ຫຼື ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ທີ່ພົວພັນເຖິງການປະຕິບັດນະໂຍບາຍຊົນເຜົ່າ ຕາມກົດໝາຍ ແລະ ລະບຽບການ;

10. ເກັບກຳ, ສັງລວມຂໍ້ມູນ, ສະຖິຕິ ວຽກງານຊົນເຜົ່າໃນແຕ່ລະໄລຍະ ເພື່ອລາຍງານໃຫ້ລັດຖະບານ;

11. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານຊົນເຜົ່າ ຕາມທີ່ໄດ້ກຳນົດໃນດຳລັດສະບັບນີ້ ພ້ອມທັງສະຫຼຸບ, ຕີລາຄາ ແລະ ລາຍງານລັດຖະບານ ຢ່າງເປັນປົກກະຕິ;

12. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຊົນເຜົ່າ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງພະແນກພາຍໃນ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານຊົນເຜົ່າ ພະແນກພາຍໃນ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດແນວທາງ, ນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ລະບຽບການ ກ່ຽວກັບວຽກງານຊົນເຜົ່າ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ ແລະ ໂຄງການ ກ່ຽວກັບວຽກງານຊົນເຜົ່າ ພ້ອມທັງແນະນຳການຈັດຕັ້ງປະຕິບັດດຳລັດສະບັບນີ້ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ;

3. ສ້າງແຜນກຳນົດ, ບຳລຸງ ແລະ ຍົກລະດັບດ້ານ ຄວາມຮູ້, ຄວາມສາມາດ ໃຫ້ພະນັກງານ-ລັດຖະກອນຊົນເຜົ່າ ເພື່ອໃຫ້ສາມາດນຳເອົາຄວາມກ້າວໜ້າທາງ ວິທະຍາສາດ ທຳມະຊາດ ແລະ ສັງຄົມ ມາພັດທະນາວຽກງານຊົນເຜົ່າ;

4. ເປັນເຈົ້າການ ປະສານສົມທົບກັບບັນດາພະແນກການ, ຂະແໜງການທີ່ກ່ຽວຂ້ອງພາຍໃນແຂວງ ໃນການຈັດຕັ້ງປະຕິບັດນະໂຍບາຍຊົນເຜົ່າ;

5. ຄົ້ນຄວ້າ, ນຳສະເໜີຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂຂໍ້ຂັດແຍ່ງ ຫຼື ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ທີ່ພົວພັນເຖິງບັນຫາຊົນເຜົ່າ ຕາມກົດໝາຍ ແລະ ລະບຽບການ;

6. ເກັບກຳ, ສັງລວມຂໍ້ມູນ, ສະຖິຕິ ວຽກງານຊົນເຜົ່າ ພາຍໃນ ແຂວງ, ນະຄອນຫຼວງ ໃນແຕ່ລະ ໄລຍະ ເພື່ອລາຍງານຂັ້ນເທິງ;

7. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານຊົນເຜົ່າ ຕາມທີ່ໄດ້ກຳນົດໃນດຳລັດສະບັບນີ້ ພ້ອມທັງສະຫຼຸບ, ຕີລາຄາ ແລະ ລາຍງານ ກະຊວງພາຍໃນ, ອົງການປົກຄອງແຂວງ,ນະຄອນຫຼວງ ຢ່າງເປັນປົກກະຕິ;

8. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຊົນເຜົ່າຕາມການມອບໝາຍ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານຊົນເຜົ່າ ຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊົນເຜົ່າ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ ແລະ ໂຄງການ ກ່ຽວກັບວຽກງານຊົນເຜົ່າ ພ້ອມທັງແນະນຳການຈັດຕັ້ງປະຕິບັດດຳລັດສະບັບນີ້ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ;

3. ສ້າງແຜນກຳນົດ, ບຳລຸງ ແລະ ຍົກລະດັບຄວາມຮູ້, ຄວາມສາມາດ ໃຫ້ພະນັກງານ-ລັດຖະກອນຊົນເຜົ່າ ເພື່ອໃຫ້ສາມາດນຳເອົາຄວາມກ້າວໜ້າທາງ ວິທະຍາສາດ ທຳມະຊາດ ແລະ ສັງຄົມ ມາພັດທະນາວຽກງານຊົນເຜົ່າ;

4. ເປັນເຈົ້າການໃນການປະສານສົມທົບກັບ ຫ້ອງການ, ອົງການຕ່າງໆ ພາຍໃນເມືອງ, ເທດສະບານ, ນະຄອນ ໃນການຈັດຕັ້ງປະຕິບັດນະໂຍບາຍຊົນເຜົ່າ;

5. ຄົ້ນຄວ້າ, ນຳສະເໜີຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂຂໍ້ຂັດແຍ່ງ ຫຼື ຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ທີ່ພົວພັນເຖິງການປະຕິບັດນະໂຍບາຍຊົນເຜົ່າ ຕາມກົດໝາຍ ແລະ ລະບຽບການ;

6. ເກັບກຳ, ສັງລວມຂໍ້ມູນ, ສະຖິຕິ ວຽກງານຊົນເຜົ່າ ພາຍໃນ ເມືອງ, ເທດສະບານ ແລະ ນະຄອນ ໃນແຕ່ລະໄລຍະ ເພື່ອລາຍງານໃຫ້ເຈົ້າເມືອງ, ເທດສະບານ ແລະ ນະຄອນ;

7. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານຊົນເຜົ່າ ຕາມທີ່ໄດ້ກຳນົດໃນດຳລັດສະບັບນີ້ ພ້ອມທັງສະຫຼຸບ, ຕີລາຄາ ແລະ ລາຍງານ ພະແນກພາຍໃນ ແຂວງ, ນະຄອນຫຼວງ, ອົງການປົກຄອງ ເມືອງ, ເທດສະບານ ແລະ ນະຄອນ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 28 ສິດ ແລະ ໜ້າທີ່ ຂອງອົງການອື່ນທີ່ກ່ຽວຂ້ອງ

ໃນການຄຸ້ມຄອງວຽກງານຊົນເຜົ່າ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ມີ ສິດ, ໜ້າທີ່ ປະສານສົມທົບ ແລະ ໃຫ້ການຮ່ວມມືກັບຂະແໜງການ ພາຍໃນ, ເປັນເຈົ້າການໃນການຈັດຕັ້ງຜັນຂະຫຍາຍ ນະໂຍບາຍຊົນເຜົ່າທີ່ກ່ຽວຂ້ອງກັບຂະແໜງການ ແລະ ທ້ອງຖິ່ນຕົນ ໃຫ້ເປັນອັນລະອຽດ, ຊີ້ນຳ-ນຳພາ ຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳ ຕາມພາລະບົດບາດຂອງ ຕົນ ແລະ ສະຫຼຸບ, ລາຍງານ ໃຫ້ ກະຊວງພາຍໃນ ເພື່ອສັງລວມລາຍງານລັດຖະບານ ແຕ່ລະໄລຍະ.

### ມາດຕາ 29 ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ

ໃນການຄຸ້ມຄອງວຽກງານຊົນເຜົ່າ ອົງການປົກຄອງບ້ານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດ ຊອບຂອງຕົນ ດັ່ງນີ້:

1. ສຶກສາອົບຮົມ, ປຸກລະດົມ, ເຕົ້າໂຮມຄວາມສາມັກຄີ, ນຳພາປະຊາຊົນເຜົ່າຕ່າງໆພາຍໃນບ້ານ ຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຊົນເຜົ່າ;

2. ຄົ້ນຄວ້າພິຈາລະນາ, ໄກ່ເກ່ຍ, ແກ້ໄຂຄຳຮ້ອງ ແລະ ຄຳສະເໜີ ກ່ຽວກັບວຽກງານຊົນເຜົ່າ ພາຍໃນບ້ານ;

3. ອະນຸລັກ, ເສີມຂະຫຍາຍມູນເຊື້ອ, ວັດທະນະທຳ, ຮີດ, ຄອງ, ປະເພນີອັນດີງາມ ຂອງ ຊາດ, ທ້ອງຖິ່ນ ແລະ ຊົນເຜົ່າ;

4. ຊຸກຍູ້, ສົ່ງເສີມ ແລະ ນຳພາປະຊາຊົນ ເຄົາລົບ ນັບຖື ຮີດ, ຄອງ, ປະເພນີອັນດີງາມ ຂອງ ກັນ ແລະ ກັນ;

5. ອຳນວຍຄວາມສະດວກ ແລະ ຮ່ວມມື ກັບພາກສ່ວນທີ່ກ່ຽວຂ້ອງ ໃນການເກັບກຳຂໍ້ມູນ, ສະຖິຕິ ກ່ຽວກັບວຽກງານຊົນເຜົ່າ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 30 ອົງການກວດກາວຽກງານຊົນເຜົ່າ

ອົງການກວດກາວຽກງານຊົນເຜົ່າ ປະກອບດ້ວຍ:

1. ອົງການກວດກາພາຍໃນ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານຊົນເຜົ່າ ຕາມທີ່ໄດ້ ກຳນົດໄວ້ໃນມາດຕາ 24 ຂອງດຳລັດສະບັບນີ້;

2. ອົງການກວດກາພາຍນອກ ແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາລັດແຕ່ລະຂັ້ນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ.

### ມາດຕາ 31 ເນື້ອໃນການກວດກາ

ການກວດກາວຽກງານຊົນເຜົ່າ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ກົດໝາຍ, ລະບຽບການ, ແຜນງານ ແລະ ໂຄງການ ກ່ຽວກັບ ວຽກງານຊົນເຜົ່າ;
2. ການປະຕິບັດ ພາລະບົດບາດ, ສິດ, ໜ້າທີ່, ຄວາມຮັບຜິດຊອບ ແລະ ແບບແຜນວິທີເຮັດວຽກຂອງອົງການຄຸ້ມຄອງວຽກງານຊົນເຜົ່າ ແຕ່ລະຂັ້ນ;
3. ການອອກນິຕິກຳຕ່າງໆ ຂອງອົງການຄຸ້ມຄອງວຽກງານຊົນເຜົ່າ ແຕ່ລະຂັ້ນ;
4. ການຄຸ້ມຄອງ ແລະ ການປະຕິບັດນະໂຍບາຍຕໍ່ຊົນເຜົ່າຕ່າງໆ ລວມທັງການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງແຕ່ລະຊົນເຜົ່າ.

### ມາດຕາ 32 ຮູບການກວດກາ

ການກວດກາວຽກງານຊົນເຜົ່າ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ;
2. ການກວດກາ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາ ແບບກະທັນຫັນ.

ການກວດກາ ຕາມລະບົບປົກກະຕິ ແມ່ນ ການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ.

ການກວດກາ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ການກວດກາ ແບບກະທັນຫັນ ແມ່ນ ການກວດກາໃນເວລາທີ່ເຫັນວ່າ ມີຄວາມຈຳເປັນ ແລະ ຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 33 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດ ສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 34 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 35 ການຈັດຕັ້ງປະຕິບັດ**

ກະຊວງພາຍໃນ ເປັນເຈົ້າການໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ ໂດຍມີການປະສານສົມທົບກັບ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນທົ່ວປະເທດ ແລະ ທຸກພາກສ່ວນ ລວມທັງພາກລັດ ແລະ ເອກະຊົນ.

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນທົ່ວປະເທດ ແລະ ທຸກພາກສ່ວນ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 36 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ